# WA Notify ນະໂຍບາຍຄວາມເປັນສ່ວນຕົວ

ນະໂຍບາຍຄວາມເປັນສ່ວນຕົວນີ້ໃຊ້ກັບແອັບ WA Exposure Notifications (WA ແຈ້ງເຕືອນກ່ຽວກັບການຕິດເຊື້ອ) COVID-19. ນີ້ແມ່ນເຕັກໂນໂລຊີແຈ້ງເຕືອນກ່ຽວກັບການຕິດເຊື້ອທີ່ໃຊ້ຢ່າງເປັນທາງການສຳລັບລັດ Washington, ສ້າງຂຶ້ນມາເພື່ອຕິດຕາມກອດກາ ແລະ ຜ່ານການຮັບຮອງຂອງ Washington State Department of Health (ພະແນກສາທາລະນະສຸກຂອງລັດ Washington).

## ພວກເຮົາເກັບກຳ ແລະ ນຳໃຊ້ຂໍ້ມູນຫຍັງ?

ເພື່ອໃຫ້ສອດຄ່ອງກັບເຈດຕະນາຂອງ Google ແລະ Apple, WA Exposure Notifications (ເຊິ່ງເອີ້ນວ່າ WA Notify (WA ແຈ້ງເຕືອນ)
ຖືກອອກແບບເພື່ອປົກປ້ອງຄວາມເປັນສ່ວນຕົວຂອງຜູ້ໃຊ້ຖືເປັນບູລິມະສິດອັນດັບໜຶ່ງ. WA Notify ເກັບກຳຂໍ້ມູນອົງປະກອບເຫຼົ່ານີ້, ເຊິ່ງບໍ່ມີຂໍ້ມູນທີ່ສາມາດລະບຸກ່ຽວກັບທ່ານ:

**ລະຫັດແບບສຸ່ມ**

- ລະຫັດແບບສຸ່ມຈະຖືກແບ່ງປັນຜ່ານ Bluetooth ລະຫວ່າງໂທລະສັບຂອງຜູ້ໃຊ້ WA Notify ເມື່ອພວກເຂົາຢູ່ໃກ້ກັນ.
- ລະຫັດແບບສຸ່ມຈະຖືກສ້າງຂຶ້ນ ແລະ ເກັບໄວ້ໃນໂທລະສັບຂອງທ່ານ, ບໍ່ແມ່ນໂດຍ WA Notify.
- ລະຫັດແບບສຸ່ມຈະຖືກໃຊ້ເພື່ອອະນຸຍາດໃຫ້ WA Notify ແລະໂທລະສັບຂອງທ່ານເພື່ອກວດສອບຄວາມເປັນໄປໄດ້ໃນການຕິດເຊື້ອພະຍາດ COVID-19.
- ລະຫັດແບບສຸ່ມຈະຖືກເກັບໄວ້ເປັນເວລາສູງສຸດ 14 ວັນ.

**ລະຫັດການຢືນຢັນ**

- ຖ້າທ່ານກວດພົບເຊື້ອພະຍາດ COVID-19 ແລະ ໜ່ວຍງານສາທາລະນະສຸກຈະໂທຫາທ່ານ, ພວກເຂົາຈະຖາມວ່າທ່ານກຳລັງໃຊ້ WA Notify ບໍ. ຖ້າທ່ານໃຊ້, ພວກເຂົາຈະໃຫ້ລິ້ງຢືນຢັນເພື່ອໃຫ້ທ່ານໄດ້ປ້ອນເຂົ້າໃນ WA Notify.
- ກົດໃສ່ລະລິ້ງການຢືນຢັນຂອງທ່ານຊ່ວຍໃຫ້ລະຫັດແບບສຸ່ມຂອງທ່ານສາມາດແບ່ງປັນໄດ້ເພື່ອເຮັດໃຫ້ຜູ້ໃຊ້ WA Notify ຄົນອື່ນທີ່ທ່ານຢູ່ໃກ້ໄດ້ຮັບການແຈ້ງເຕືອນໂດຍບໍ່ເປີດເຜີຍຊື່ວ່າພວກເຂົາອາດຈະສຳພັດໄດ້ເຊື້ອພະຍາດແລ້ວ.
- ທ່ານລອງຕັດສິນໃຈເບິ່ງວ່າຈະກົດໃສ່ ຫຼື ບໍ່ກົດໃສ່ລິ້ງການຢືນຢັນເພື່ອແບ່ງປັນໃຫ້ຜູ້ໃຊ້ WA Notify ຄົນອື່ນ.

**ບັນທຶກການນຳໃຊ້**

- ເຊັ່ນດຽວກັບເກືອບທຸກແອັບ ຫຼື ບໍລິການອິນເຕີເນັດ, WA Notify ສ້າງບັນທຶກໂດຍອັດຕະໂນມັດເມື່ອທ່ານໃຊ້ບໍລິການ. ບັນທຶກເຫຼົ່ານີ້ລວມມີຂໍ້ມູນບາງຢ່າງກ່ຽວກັບໂທລະສັບຂອງທ່ານ. ພວກເຮົາໃຊ້ຂໍ້ມູນນີ້ເພື່ອແກ້ໄຂບັນຫາຕ່າງໆກັບ WA Notify.
- ບັນທຶກເຫຼົ່ານີ້ບໍ່ໄດ້ລວມເອົາລະຫັດແບບສຸ່ມ ຫຼື ລິ້ງການຢືນຢັນ ແລະ ບໍ່ສາມາດຖືກນຳໃຊ້ເພື່ອຜູກກັບລະຫັດປະເພດໃດໜຶ່ງກັບທ່ານ ຫຼື ໂທລະສັບຂອງທ່ານ.
- ບັນທຶກເຫຼົ່ານີ້ຈະຖືກລຶບໂດຍອັດຕະໂນມັດ 14 ວັນຫຼັງຈາກສ້າງ.

**ການວິເຄາະຂໍ້ມູນ**

- ຖ້າທ່ານເລືອກທີ່ຈະເປີດໃຊ້ການວິເຄາະພິເສດ, ຂໍ້ມູນລວມຈະຖືກແບ່ງປັນກັບໜ່ວຍງານສາທາລະນະສຸກເພື່ອຊ່ວຍປັບປຸງແອັບ.
- ຂໍ້ມູນນີ້ປະກອບມີສະຖິຕິກ່ຽວກັບການນຳໃຊ້ແອັບ. ມັນບໍ່ລວມຂໍ້ມູນໃດໆທີ່ສາມາດຖືກນຳໃຊ້ເພື່ອລະບຸຕົວທ່ານ.
- ທ່ານສາມາດເລືອກທີ່ຈະບໍ່ແບ່ງປັນຂໍ້ມູນນີ້ໂດຍການປິດການແບ່ງປັນການວິເຄາະໃນແອັບ.
- ຕາມການອອກແບບ, WA Notify ບໍ່ເກັບເອົາຂໍ້ມູນທີ່ຕັ້ງຈາກໂທລະສັບຂອງທ່ານ ແລະ ບໍ່ເກັບເອົາ ຫຼື ແບ່ງປັນຂໍ້ມູນທີ່ຜູກທ່ານ ຫຼື ໂທລະສັບຂອງທ່ານໄປຍັງລະຫັດແບບສຸ່ມ ຫຼື ລະຫັດການຢືນຢັນ.

## ເມື່ອໃດພວກເຮົາຈະແບ່ງປັນຂໍ້ມູນຂອງທ່ານ?

ພວກເຮົາຈະບໍ່ເກັບກຳຂໍ້ມູນຂອງທ່ານຕາມລຳພັງໃຈ ຫຼື ບໍ່ແບ່ງປັນຂໍ້ມູນຂອງທ່ານກັບຜູ້ອື່ນ, ເວັ້ນເສຍແຕ່ວ່າທ່ານເລືອກທີ່ຈະໃສ່ລິ້ງຢືນຢັນ. ຖ້າທ່ານເລືອກເຮັດແນວນັ້ນ, WA Notify ຈະແບ່ງປັນລະຫັດແບບສຸ່ມຂອງທ່ານກັບໂທລະສັບອື່ນໆທີ່ຢູ່ໃກ້ໂທລະສັບຂອງທ່ານ. ລິ້ງຢືນຢັນບໍ່ສາມາດເຊື່ອມຕໍ່ກັບຄືນຫາທ່ານໄດ້ໂດຍຜູ້ອື່ນທີ່ບໍ່ສາມາດເຂົ້າເຖິງໂທລະສັບຂອງທ່ານ.

## ພວກເຮົາປົກປ້ອງຂໍ້ມູນຂອງທ່ານແນວໃດ?

WA Notify ປົກປ້ອງລະຫັດແບບສຸ່ມໂດຍໃຊ້ Exposure Notification Framework (ກອບການແຈ້ງເຕືອນກ່ຽວກັບການຕິດເຊື້ອ) ຂອງ Google ແລະ Apple ເຊິ່ງປະກອບມີຂໍ້ກຳນົດທີ່ແນ່ນອນກ່ຽວກັບວິທີການເຂົ້າລະຫັດ ແລະ ການໂອນພວກມັນ. WA Notify ບໍ່ເກັບ ຫຼື ສ້າງລະຫັດແບບສຸ່ມຂອງທ່ານ — ໂທລະສັບຂອງທ່ານສ້າງ.

## ສິດທິຂອງທ່ານຕໍ່ຂໍ້ມູນຂອງທ່ານ

ເນື່ອງຈາກວ່າພວກເຮົາບໍ່ມີທາງທີ່ຈະຜູກລິ້ງການຢັ້ງຢືນ ຫຼື ບັນທຶກການນຳໃຊ້ແອັບໂດຍບໍ່ຕ້ອງໃຊ້ໂທລະສັບຂອງທ່ານ, ພວກເຮົາບໍ່ມີທາງທີ່ຈະສະໜອງ ຫຼື ລຶບຂໍ້ມູນນີ້ໃຫ້ທ່ານຢ່າງປອດໄພຖ້າທ່ານຖາມຫາ. ທ່ານສາມາດຄວບຄຸມການນຳໃຊ້ WA Notify.

ໂທລະສັບຂອງທ່ານຄວນອະນຸຍາດໃຫ້ທ່ານປິດການແຈ້ງເຕືອນການຕິດເຊື້ອ ຫຼື ລຶບບັນທຶກການສຳຜັດທີ່ເກັບໄວ້ໃນໂທລະສັບຂອງທ່ານໄດ້ທຸກເວລາ. ນອກຈາກນັ້ນ, ທ່ານສາມາດຖອນຕິດຕັ້ງ WA Notify ໄດ້ທຸກເວລາ. ຖ້າທ່ານເຮັດແນວນັ້ນ, ລະຫັດແບບສຸ່ມທັງໝົດທີ່ເກັບໄວ້ຈະຖືກລຶບອອກ.